ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

0051- ---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ................/ອຄ.ກອກ
ນະຄອນຫຼວງວຽງຈັນ, ວັນທີ 13 JAN 2009

# ແຈ້ງການ

ເຖິງ: ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.
ເລື່ອງ: ແຈ້ງການແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍຮູບແບບ ແລະ ຂະໜາດຜະລິດຕະພັນໄມ້

---

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າສະບັບເລກທີ 188/ນຍ, ລົງວັນທີ 17/08/2006.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ສະບັບເລກທີ 17/ນຍ, ລົງວັນທີ 22/09/2008.
- ອີງຕາມຂໍ້ຕົກລົງວ່າດ້ວຍຮູບແບບ ແລະ ຂະໜາດຜະລິດຕະພັນໄມ້ ສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຜັນຂະຫຍາຍເນື້ອໃນຂອງຂໍ້ຕົກລົງວ່າດ້ວຍຮູບແບບ ແລະ ຂະໜາດຜະລິດຕະພັນໄມ້ ສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008 ແລະ ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ສະບັບເລກທີ 0221/ອຄ, ລົງວັນທີ 03/02/2007 ໂດຍເລັ່ງໃສ່ເຮັດໃຫ້ການເຄື່ອນໄຫວຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ໃນ ສປປ ລາວ ດຳເນີນໄປຕາມທິດທາງນະໂຍບາຍຂອງລັດຖະບານ ແລະ ທັງຮັບປະກັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນບັນດາເຜົ່າ, ພ້ອມດຽວກັນນີ້ກໍ່ເພື່ອເຮັດໃຫ້ການສ້າງມູນຄ່າເພີ່ມສູງໃນຂະບວນການຜະລິດອຸດສາຫະກຳປຸງແຕ່ງໄມ້ ໂດຍການນຳໃຊ້ຊັບພະຍາກອນທີ່ມີໃນຈຳນວນຈຳກັດ ແລະ ຫາຍາກ ໃຫ້ເກີດຜົນປະໂຫຍດສູງສຸດ.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການແນະນຳ, ຊຶ່ງມີລາຍລະອຽດຂອງເນື້ອໃນດັ່ງຕໍ່ໄປນີ້:

## I. ຂະບວນການປຸງແຕ່ງຜະລິດຕະພັນໄມ້ເລື່ອຍແປຮູບ

ຜະລິດຕະພັນໄມ້ເລື່ອຍແປຮູບ: ຕ້ອງໄດ້ຜ່ານຂະບວນການຜະລິດຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ຂັ້ນໜຶ່ງ ຕາມເລກລະຫັດ 1610 (ໂຮງງານເລື່ອຍໄມ້) ໂດຍຜ່ານຂັ້ນຕອນການຜະລິດດ້ວຍເຄື່ອງຈັກຕາມທີ່ໄດ້ກຳນົດໃນຂໍ້ 7.3.1 ຂອງຂໍ້ຕົກລົງສະບັບເລກທີ 0221/ອຄ ນັ້ນ, ຊຶ່ງລວມມີຂັ້ນຕອນການຜະລິດຄື: ການເລື່ອຍ, ການອົບ ຫຼື ການຕາກ, ການຊອຍ, ການປາດ, ການຕັດຂະໜາດ, ການຂຶ້ນຮູບເປັນຮູບແບບຕ່າງໆຕາມຈຸດປະສົງຂອງການນຳໃຊ້, ຜິວຂ້າງນອກຂອງຜະລິດຕະພັນເຫຼົ່ານີ້ຈະມີລັກສະນະຫຍາບງບໍ່ມີຄວາມລະອຽດ.

ວັດຖຸດິບທີ່ສາມາດ ນຳໃຊ້ເຂົ້າໃນການຜະລິດໄດ້ມີ: ໄມ້ຫວງຫ້າມ, ໄມ້ຄຸ້ມຄອງປະເພດ 1; 2; 3 ແລະ ໄມ້ອື່ນໆ (ໄມ້ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ຊະນິດໄມ້ຫວງຫ້າມ ແລະ ໄມ້ຄຸມຄອງ 1; 2; 3).

ຜະລິດຕະພັນດັ່ງກ່າວ ມີບໍລິມາດຕາມຂະໜາດທີ່ໄດ້ກຳນົດໃນຂໍ້ຕົກລົງເລກທີ 1415/ອຄ.ກອກ ແລະ ມີມູນຄ່າເພີ່ມໂດຍປະມານດັ່ງທີ່ໄດ້ສະແດງໃນຕາຕະລາງທີ່ 1 ດັ່ງລຸ່ມນີ້:

**ຕາຕະລາງທີ 1:**

| ເລກລະຫັດ | ຊື່ຜະລິດຕະພັນ: Products | ຂະໜາດ, ຊມ / Size, cm | | | ບໍລິມາດ, $ม^3$ /Vol., $m^3$ | ມູນຄ່າເພີ່ມ ປະມານ(%) | ຮູບແບບຜະລິດຕະພັນໄມ້ |
|---|---|---|---|---|---|---|---|
| | | ໜາ | ກ້ວາງ | ຍາວ | | | |
| | 1. ໄມ້ຕີຕັບ | 7 ຂຶ້ນໄປ | ຕາມໜ້າໄມ້ | ບໍ່ກຳນົດ | - | | - |
| 1610 ໂຮງງານ ເລື່ອຍໄມ້ Sawmill | 2. ໄມ້ແປຮູບທົ່ວໄປ | | | | | | |
| | 2.1. ໄມ້ 4X8 | 4 | 8 | 800 | 0,026 | | |
| | 2.2. ໄມ້ 5X10 | 5 | 10 | 800 | 0,040 | | |
| | 2.3. ໄມ້ 5X12 | 5 | 12 | 800 | 0,048 | | |
| | 2.4. ໄມ້ 5X15 | 5 | 15 | 800 | 0,060 | | |
| | 2.5. ໄມ້ 6X12 | 6 | 12 | 800 | 0,058 | | |
| | 2.6. ໄມ້ 6X18 | 6 | 18 | 800 | 0,086 | 22 | |
| | 2.7. ໄມ້ 6X20 | 6 | 20 | 800 | 0,096 | | |
| | 2.8. ໄມ້ແປຮູບທີ່ຈະໄປ ເຮັດເສົາເຮືອນ | 15-30 | 15-30 | 300-800 | 0,720 | | |
| | 2.9. ໄມ້ແປຮູບທີ່ຈະໄປ ເຮັດແປ້ນທຸກຊະນ | 1-5 | ≤ 20 | 800 | 0,080 | | ໄມ້ເລື່ອຍແປຮູບ. |
| | 3. ໄມ້ຊອຍຕ່າງໆ | | | | | | ໄມ້ເລື່ອຍແປຮູບ. |
| | 3.1. ໄມ້ຮູບປະພັນທຸກຊະນິດ | 6 | 20 | 300 | 0,036 | | |
| | 3.2. ໄມ້ 3X3 | 3 | 3 | 800 | 0,007 | | |
| | 3.3. ໄມ້ 4X4 | 4 | 4 | 800 | 0,012 | | |
| | 3.4. ໄມ້ 3X5 | 3 | 5 | 800 | 0,012 | 22 | |
| | 3.5. ໄມ້ 3X7 | 3 | 7 | 800 | 0,017 | | |
| | 3.6. ໄມ້ 3X8 | 3 | 8 | 800 | 0,019 | | |
| | 3.7. ໄມ້ເສັ້ນນ້ອຍທຸກຊະນິດ | 1,3 | 5 | 800 | 0,012 | | |
| | 4. ໄມ້ເສດຈາກການເລື່ອຍ | | | | - | | |
| | 5. ຂີ້ເລື່ອຍ, ແປ້ງໄມ້ | | | | - | | |

## II. ຂະບວນການປຸງແຕ່ງຜະລິດຕະພັນໄມ້ເຄິ່ງສຳເລັດຮູບ

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ: ຕ້ອງໄດ້ຜ່ານຂະບວນການຜະລິດຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ຂັ້ນສອງຕາມເລກລະຫັດ 1621 (ໂຮງງານໄມ້ປອກ, ໄມ້ຝານ), ເລກລະຫັດ 1622.1(ໂຮງງານປຸງແຕ່ງໄມ້ຮັບໃຊ້ການກໍ່ສ້າງ ຫຼື ໄມ້ເຄື່ອງເຮືອນ), ຕາມເລກລະຫັດ 1701.1 (ໂຮງງານຜະລິດເຍື່ອເຈ້ຍ) ໂດຍຜ່ານຂັ້ນຕອນການຜະລິດດ້ວຍເຄື່ອງຈັກທີ່ໄດ້ກຳນົດໃນຂໍ້ 7.3.2 ຂອງຂໍ້ຕົກລົງເລກທີ 0221/ອຄ ນັ້ນ, ຊຶ່ງຕາມລັກສະນະຕົວຈິງທີ່ມີຂະບວນການຜະລິດທີ່ແຕກຕ່າງກັນຕາມຈຸດປະສົງຂອງການຊົມໃຊ້ຜະລິດຕະພັນຄື:

2.1. ໄມ້ປອກ, ໄມ້ຝານ: ຕ້ອງໄດ້ກະກຽມໄມ້ທ່ອນ, ການປອກ ຫຼື ການຝານ, ການອົບ, ການເຮັດໃຫ້ເຢັນ, ການຕັດຕາມຂະໜາດ ແລະ ອື່ນໆ.

2.2. ໄມ້ເຄື່ອງເຮືອນ: ຕ້ອງຜ່ານຂະບວນການເລື່ອຍ, ການຕັດຂະໜາດ, ການອົບ, ການບາກ, ການເຈາະ, ການປາດຂຶ້ນຮູບ, ການກົບ, ການຂັດ, ການມັດ ແລະ ອື່ນໆ ຫຼື ຕາມລັກສະນະຕົວຈິງ ຕາມຈຸດປະສົງຂອງການຊົມໃຊ້ຜະລິດຕະພັນ.

2.3. ເຍື່ອເຈ້ຍ: ຕ້ອງໄດ້ກະກຽມໄມ້ ຫຼື ວັດຖຸດິບ, ການຝັກ, ການບົດ, ການອົ້ວ, ການຫຸ້ມຫໍ່ ແລະ ອື່ນໆ.

ວັດຖຸດິບທີ່ສາມາດນຳໃຊ້ເຂົ້າໃນການຜະລິດໄດ້ມີ: ໄມ້ຫວງຫ້າມ, ໄມ້ຄຸ້ມຄອງປະເພດ 1; 2; 3 ແລະ ໄມ້ອື່ນໆ (ໄມ້ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ຊະນິດໄມ້ຫວງຫ້າມ ແລະ ໄມ້ຄຸມຄອງ 1; 2; 3).

ຜະລິດຕະພັນດັ່ງກ່າວມີບໍລິມາດຕາມຂະໜາດທີ່ໄດ້ກຳນົດໃນຂໍ້ຕົກລົງເລກທີ 1415/ອຄ.ກອກ ແລະ ມີມູນຄ່າເພີ່ມໂດຍປະມານດັ່ງທີ່ໄດ້ສະແດງໃນຕາຕະລາງທີ່ 2 ດັ່ງລຸ່ມນີ້:

**ຕາຕະລາງທີ 2:**

| ເລກລະຫັດ | ລາຍການຜະລິດຕະພັນ: Products | ຂະໜາດບໍ່ກາຍ, ຊມ / Max. Size, cm | | | ບໍລິມາດ, ມ³ /Vol., m³ | ມູນຄ່າເພີ່ມ ປະມານ(%) | ຮູບແບບຜະລິດຕະພັນໄມ້ |
|---|---|---|---|---|---|---|---|
| | | ໜາ | ກວ້າງ | ຍາວ | | | |
| 1621 ໂຮງງານປຸງແຕ່ງແຜ່ນໄມ້, ໄມ້ປອກ ແລະ ໄມ້ອັດ ຕ່າງໆ Manufacture of veneer sheets, plywood, and boards. | 1. ໄມ້ປອກ | 0,1-2,8 | ≤ 140 | ≤ 260 | 0,102 | - | ເຄິ່ງສຳເລັດຮູບ. |
| | 2. ໄມ້ຝານ | 0,1-2,8 | ≤ 140 | ≤ 260 | 0,102 | - | ເຄິ່ງສຳເລັດຮູບ. |
| | 3. ໄມ້ອັດປະສານ | 2,0 | 122 | 244 | 0,059 | - | ສຳເລັດຮູບ. |
| | 4. ໄມ້ອັດຈາກເສດໄມ້ | 3,2 | 122 | 244 | 0,095 | - | ສຳເລັດຮູບ. |
| | 5. ໄມ້ອັດອື່ນໆ | 3,2 | 122 | 244 | 0,095 | - | ສຳເລັດຮູບ. |

| | | | | | | | |
|---|---|---|---|---|---|---|---|
| 1622.1 ໂຮງງານປຸງແຕ່ງໄມ້ ທີ່ໃຊ້ໃນການກໍ່ສ້າງ (ໄມ້ເຄື່ອງເຮືອນ) Manufacture of builders' carpentry and joinery. | 1. ໄມ້ໂຄງຫລັງຄາ | | | | | | |
| | • ໄມ້ອົກໄກ່ (ໄມ້ແປ) | 5 | 20 | 800 | 0,080 | | ↑ |
| | • ໄມ້ໂຄງເພດານ | 4 | 8 | 800 | 0,026 | | |
| | • ໄມ້ຂ້າວ | 5 | 10 | 800 | 0,040 | | |
| | • ໄມ້ສີຍົວ | 5 | 15 | 800 | 0,060 | | |
| | • ໄມ້ຂັດແປ | 5 | 10 | 800 | 0,040 | | |
| | • ໄມ້ເສົາຕັ້ງ | 5 | 15 | 400 | 0,030 | | |
| | • ໄມ້ປ້ານລົມ,ປ້ານຊາຍ | 3 | 25 | 800 | 0,060 | - | ເຄິ່ງສຳເລັດຮູບ. |
| | • ໄມ້ຂື່ | 5 | 18 | 800 | 0,072 | | |
| | • ໄມ້ຄໍສອງ | 5 | 20 | 800 | 0,080 | | |
| | 2. ໄມ້ເສົາໄຊ | 20 | 20 | 400 | 0,160 | | |
| | 3. ໄມ້ຂາງໜີບ | 5 | 20 | 800 | 0,080 | | |
| | 4.ໄມ້ແປ້ນພື້ນ, ແປ້ນແອ້ມ | 3 | 25 | 800 | 0,060 | | |
| | 5. ໄມ້ຕົງ | 5 | 10 | 800 | 0,040 | | |
| | 6. ໄມ້ຂາງ | 5 | 20 | 800 | 0,080 | | ↓ |
| 1622.2 ໂຮງງານປຸງແຕ່ງເຄື່ອງປະກອບໃນອາຄານ Manufacture of builders' carpentry and joinery. | 1. ຂະໜາດວົງກົບປະຕູ | 12 | 300 | 250 | - | | ↑ |
| | 2. ຂະໜາດວົງກົບປ່ອງຢ້ຽມ | 12 | 300 | 250 | - | | |
| | 3. ຂະໜາດບານປະຕູ | 4.5 | 150 | 250 | 0,169 | | |
| | 4. ຂະໜາດບານປ່ອງຢ້ຽມ | 3.5 | 150 | 250 | 0,131 | | |
| | 5. ໄມ້ຂອບວົງກົບປະຕູ | 6 | 12 | 300 | 0,022 | | |
| | 6.ໄມ້ຂອບວົງກົບປ່ອງຢ້ຽມ | 6 | 12 | 300 | 0,022 | 108 | |
| | 7. ໄມ້ຂອບບານປະຕູ | 4,5 | 12 | 250 | 0,014 | | |
| | 8. ໄມ້ຂອບບານປ່ອງຢ້ຽມ | 3,5 | 12 | 250 | 0,011 | 175 | ສຳເລັດຮູບ. |
| | 9. ລູກຕັ້ງ | 20 | 20 | 150 | 0,060 | | |
| | 10. ໄມ້ຂອບ, ຄິ້ວ, ສາຍບົວ | 3 | 15 | 650 | 0,029 | | |
| | 11. ແມ່ຂັ້ນໄດ | 5 | 20 | 600 | 0,060 | | |
| | 12. ລູກຂັ້ນໄດ | 5 | 30 | 150 | 0,023 | | |
| | 13. ຮາວພະນັກລະບຽງ, ຮາວຂັ້ນໄດ | 6 | 15 | 600 | 0,054 | | ↓ |
| | 14. ເຄື່ອງປະກອບໃນອາຄານອື່ນໆ | - | - | - | - | | |

| | | | | | | | |
|---|---|---|---|---|---|---|---|
| 1624<br>ໂຮງງານປຸງແຕ່ງໄມ້ປູພື້ນ ແລະ ໄມ້ປັກເກ.<br>Manufacture of wood flooring a nd parquet | 1. <u>ໄມ້ປັກເກ</u><br>(ຈາກເສດໄມ້ໂຮງເລື່ອຍ) | | | | | | |
| | 1.1. ໄມ້ປັກເກປູພື້ນ ແລະ ປັກເກອື່ນໆ | 2,5 | 15 | 120 | 0,005 | | |
| | 1.2. ໄມ້ປູພື້ນແບບຕໍ່ເສັ້ນ-ຕໍ່ແຜ່ນທຸກຊະນິດ | 2,5 | 20 | 650 | 0,032 | | |
| | 1.3.ໄມ້ປູພື້ນແບບໄມເສດ | 1,5 | 50 | 50 | 0,004 | | |
| | 2. <u>ໄມ້ປູພື້ນ</u> | | | | | | |
| | 2.1. ໄມ້ປູພື້ນແບບດ້ານເທິງມີຮ່ອງກັນມື່ນ. | 4,5 | 20 | 650 | 0,059 | 77 | |
| | 2.2. ໄມ້ປູພື້ນແບບໜ້າລຽບ | 2,5 | 20 | 650 | 0,033 | | ສຳເລັດຮູບ. |
| | 2.3. ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງຮອບຕົວ | 2,5 | 20 | 650 | 0,033 | | |
| | 2.4. ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງປະສົມ | 2,5 | 20 | 650 | 0,033 | | |
| | 3. <u>ໄມ້ປະກອບຖັງລົດ</u>: | | | | | | |
| | 3.1.ໄມ້ຂາງລົດ | 5,5 | 15 | 250 | 0,021 | | |
| | 3.2. ແປ້ນປູພື້ນຖັງລົດ | 3,5 | 15 | 650 | 0,034 | | |
| | 3.3. ຝາຂ້າງ | 3,5 | 15 | 300 | 0,016 | | |
| 1701.1<br>ໂຮງງານຜະລິດເຍື່ອເຈ້ຍ<br>Manufacture of paper pulp | 1. ເຍື່ອໄມ້ (ເຍື່ອໄມ້ບົດ ແລະ ເຍື່ອໄມ້ເຄມີ)<br>2. ເຍື່ອເຈ້ຍຈາກໄຍຝ້າຍ<br>3. ເຍື່ອເຈ້ຍຈາກເຈ້ຍເສດ<br>4. ເຍື່ອເຈ້ຍຈາກໄມ້ປ່ອງ | ບໍ່ມີການກຳນົດ | | | | | ເຄິ່ງສຳເລັດຮູບ. |
| 1701.2<br>ໂຮງງານຜະລິດເຈ້ຍ ແລະ ເຈ້ຍແຂງ<br>Manufacture of paper and paperboard | 1. ເຈ້ຍແລະເຈ້ຍແຂງທີ່ບໍ່ເຄືອບ ຫຼື ເຄືອບ<br>2. ເຈ້ຍໜັງສືພິມ, ເຈ້ຍຂຽນ<br>3. ເຈ້ຍເຊັດໜ້າ,ເຈ້ຍອະນາໄມ ແລະ ເຈ້ຍອື່ນໆ<br>4. ເຈ້ຍພັນກອກຢາສູບ<br>5. ເຈ້ຍມັນ ແລະເຈ້ຍອື່ນໆ | ບໍ່ມີການກຳນົດ | | | | | ສຳເລັດຮູບ |
| 1702<br>ໂຮງງານຜະລິດເຄື່ອງຫຸ້ມຫໍ່ດ້ວຍເຈ້ຍ, ເຈ້ຍແຂງ, ແກັດ ຫຼື ກັບເຈ້ຍ<br>Manufacture of containers from paper and paperboard | 1. ເຈ້ຍທີ່ໃຊ້ໃນການບັນຈຸຫີບຫໍ່<br>2. ກັບເຈ້ຍ<br>3. ແກັດເຈ້ຍ | ບໍ່ມີການກຳນົດ | | | | | ສຳເລັດຮູບ |

| | | | |
|---|---|---|---|
| 1709<br>ໂຮງງານຜະລິດເຄື່ອງໃຊ້ອື່ນໆຈາກເຈ້ຍ ແລະ ເຈ້ຍແຂງ<br>Manufacture of other articles of paper and paperboard | 1. ຜະລິດຕະພັນເຄື່ອງໃຊ້ສອຍຈາກເຈ້ຍ ແລະ ເຈ້ຍແຂງ | ບໍ່ມີການກຳນົດ | ສຳເລັດຮູບ |

## III. ຂະບວນການປຸງແຕ່ງຜະລິດຕະພັນໄມ້ສຳເລັດຮູບ

ຜະລິດຕະພັນໄມ້ສຳເລັດຮູບ: ຕ້ອງໄດ້ຜ່ານຂະບວນການຜະລິດຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ຂັ້ນສອງ ເລກລະຫັດ 1621 (ໂຮງງານໄມ້ອັດ), ເລກລະຫັດ 1622.2 (ໂຮງງານປຸງແຕ່ງໄມ້ເຄື່ອງປະກອບອາຄານ), ເລກລະຫັດ 1624 (ໂຮງງານປຸງແຕ່ງໄມ້ປູພື້ນ ແລະ ໄມ້ປັກເກ), ເລກລະຫັດ 1701.2 (ໂຮງງານຜະລິດເຈ້ຍ ແລະ ເຈ້ຍແຂງ), ເລກລະຫັດ 1702 (ໂຮງງານຜະລິດເຄື່ອງຫຸ້ມຫໍ່ດ້ວຍເຈ້ຍ ແລະ ເຈ້ຍແຂງ), ເລກລະຫັດ 1709 (ໂຮງງານຜະລິດເຄື່ອງໃຊ້ອື່ນໆຈາກເຈ້ຍ ແລະ ເຈ້ຍແຂງ) ແລະ ຜ່ານຂະບວນການຜະລິດຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ຂັ້ນສາມ ເລກລະຫັດ 1623 (ໂຮງງານປຸງແຕ່ງພາສະນະບັນຈຸດ້ວຍໄມ້), ເລກລະຫັດ 1629 (ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້), ເລກລະຫັດ 3100 (ໂຮງງານເຟີນີເຈີດ້ວຍໄມ້) ໂດຍສະເພາະຕ້ອງໄດ້ຜ່ານຂັ້ນຕອນການຜະລິດດ້ວຍເຄື່ອງຈັກທີ່ໄດ້ກຳນົດໄວ້ໃນຂໍ້ 7.3.2 ແລະ ຂໍ້ 7.3.3 ຂອງຂໍ້ຕົກລົງທີ 0221/ອຄ ນັ້ນ, ຊຶ່ງຜະລິດຕາມລັກສະນະຕົວຈິງ ແລະ ຕາມຈຸດປະສົງຂອງການຊົມໃຊ້ຜະລິດຕະພັນຄື:

3.1. ໄມ້ອັດ ຕ້ອງໄດ້ກະກຽມໄມ້ທ່ອນ ແລະ ຜ່ານຂັ້ນຕອນການຜະລິດຄື: ການຕັດ, ການເລື່ອຍ, ການປອກ ຫຼື ການຝານ, ການອົບ, ການຄັດເລືອກ, ການຕິດກາວ, ການໜີບເຢັນ, ການໜີບຮ້ອນ, ການຕັດຂະໜາດ, ການຂັດໜ້າ, ການກວດສອບຄຸນນະພາບ ແລະ ການຫຸ້ມຫໍ່.

ວັດຖຸດິບທີ່ນຳໃຊ້ເຂົ້າໃນການຜະລິດ ອາດຈະປະກອບມີ: ໄມ້ຄຸ້ມຄອງປະເພດ 1; 2; 3 ແລະ ໄມ້ອື່ນໆ (ໄມ້ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ຊະນິດໄມ້ຫວງຫ້າມ ແລະ ໄມ້ຄຸມຄອງ 1; 2; 3).

3.2. ເຄື່ອງປະກອບໃນອາຄານ (ຕາມລະຫັດ 1622.2) ຕ້ອງຜ່ານຂັ້ນຕອນການຜະລິດຄື: ການເລື່ອຍ, ການຕັດຂະໜາດ, ການອົບ, ການປາດ, ການຂຶ້ນຮູບ, ການກົບ, ການຂັດ, ການຫຸ້ມຫໍ່ ແລະ ອື່ນໆ.

3.3. ໄມ້ປູພື້ນ ແລະ ໄມ້ປັກເກ ຕ້ອງຜ່ານຂັ້ນຕອນການຜະລິດຄື: ການເລື່ອຍ, ການຕັດຂະໜາດ, ການອົບ, ການປາດ, ການຂຶ້ນຮູບ, ການແລ່ນຮ່ອງ, ການແລ່ນລີ້ນ ຫຼື ຕາມຊະນິດຜະລິດຕະ ພັນ, ການກົບ, ການຂັດ, ການຫຸ້ມຫໍ່ ແລະ ອື່ນໆ.

3.4. ເຄື່ອງໃຊ້ສອຍດ້ວຍໄມ້ ຕ້ອງຜ່ານຂັ້ນຕອນການຜະລິດຄື: ການເລື່ອຍ, ການຕັດຂະໜາດ, ການອົບ, ການຂຶ້ນຮູບ, ການປາດ, ການເຈາະ, ການແກະສະຫຼັກລວດລາຍ, ການຂັດ ແລະ ອື່ນໆ ຕາມແຕ່ລະກໍລະນີ.

3.5. ເຟີນີເຈີດ້ວຍໄມ້ ຕ້ອງຜ່ານຂັ້ນຕອນການຜະລິດຄື: ການເລື່ອຍ, ການຕັດຂະໜາດ, ການອົບ, ການຂຶ້ນຮູບ, ການເຈາະຮູ, ການກົບ, ການຂັດ, ການປະກອບ ຫຼື ເປັນຊິ້ນສ່ວນຄົບ ຊຸດ, ການຫຸ້ມຫໍ່ ແລະ ອື່ນໆ.

- ວັດຖຸດິບທີ່ສາມາດນຳໃຊ້ເຂົ້າໃນການຜະລິດໄດ້ມີ: ໄມ້ຫວງຫ້າມ, ໄມ້ຄຸ້ມຄອງປະເພດ 1; 2; 3 ແລະ ໄມ້ອື່ນໆ (ໄມ້ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ຊະນິດໄມ້ຫວງຫ້າມ ແລະ ໄມ້ຄຸມຄອງ 1; 2; 3).

*<u>ໝາຍເຫດ</u>: ສຳລັບ ຂໍ້ 3 ໄມ້ປະກອບຖັງລົດ, ເລກລະຫັດ 1624, ໃນຕາຕະລາງທີ່ 2 ແມ່ນຫ້າມນຳໃຊ້ໄມ້ຫວງຫ້າມມາເປັນວັດຖຸດິບ.*

3.6. ພາຊະນະບັນຈຸດ້ວຍໄມ້ ຕາມເລກລະຫັດ 1623 ຕ້ອງຜ່ານຂັ້ນຕອນການຜະລິດຄື: ການເລື່ອຍ, ການຕັດຂະໜາດ, ການອົບ, ການກົບ ຫຼື ບໍ່ກົບ, ການປະກອບ ຫຼື ເປັນຊິ້ນສ່ວນຄົບຊຸດ, ການຫຸ້ມຫໍ່ ແລະ ອື່ນໆ.

ວັດຖຸດິບທີ່ສາມາດນຳໃຊ້ເຂົ້າໃນການຜະລິດໄດ້ມີ: ໄມ້ຄຸ້ມຄອງປະເພດ 3 ແລະ ໄມ້ອື່ນໆ (ໄມ້ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ຊະນິດໄມ້ຫວງຫ້າມ ແລະ ໄມ້ຄຸມຄອງ 1; 2;).

3.7. ຜະລິດຕະພັນຈາກຕໍ່ໄມ້ ແລະ ຮາກໄມ້ ເລກລະຫັດ 1629 ແລະ 3100 ຕ້ອງຜ່ານຂັ້ນຕອນການຜະລິດຄື: ການຊອຍ ຫຼື ການເລື່ອຍ, ການຕັດຂະໜາດ, ການຂຶ້ນຮູບ, ການປາດ, ການເຈາະ, ການຄວັດ, ການແກະສະຫຼັກລວດລາຍ, ການປະກອບ ຫຼື ເປັນຊິ້ນສ່ວນຄົບຊຸດ. ຜະລິດຕະພັນຈາກຕໍ່ໄມ້ ຫຼື ຮາກໄມ້ນີ້ຕ້ອງມີຮູບຊົງຊັດເຈນ, ສວຍງາມ ແລະ ປານີດ.

ວັດຖຸດິບທີ່ສາມາດນຳໃຊ້ເຂົ້າໃນການຜະລິດໄດ້ມີ: ໄມ້ຫວງຫ້າມ, ໄມ້ຄຸ້ມຄອງປະເພດ 1; 2; 3 ແລະ ໄມ້ອື່ນໆ (ໄມ້ທີ່ບໍ່ນອນຢູ່ໃນບັນຊີລາຍຊື່ຊະນິດໄມ້ຫວງຫ້າມ ແລະ ໄມ້ຄຸມຄອງ 1; 2; 3).

ຜະລິດຕະພັນດັ່ງກ່າວມີບໍລິມາດຕາມຂະໜາດທີ່ໄດ້ກຳນົດໃນຂໍ້ຕົກລົງເລກທີ 1415/ອຄ.ກອກ ແລະ ມູນຄ່າເພີ່ມໂດຍປະມານດັ່ງທີ່ໄດ້ສະແດງໃນຕາຕະລາງທີ່ 3 ດັ່ງລຸ່ມນີ້:

<u>ຕາຕະລາງທີ</u> 3:

| ເລກລະຫັດ | ລາຍການຜະລິດຕະພັນ: Products | ຂະໜາດບໍ່ກາຍ, ຊມ / Max. Size, cm | | | ບໍລິມາດ, ມ³ /Vol., m³ | ມູນຄ່າເພີ່ມ ປະມານ(%) | ຮູບແບບ ຜະລິດຕະພັນ |
|---|---|---|---|---|---|---|---|
| | ຊື່ເປັນພາສາລາວ | ໜາ | ກ້ວາງ | ຍາວ | | | |
| 1623 ໂຮງງານປຸງແຕ່ງພາຊະນະບັນຈຸດ້ວຍໄມ້ Manufacture of wooden containers | 1. ຫີບ ຫລື ແກັດ | - | - | - | | | ↑ |
| | - ໄມ້ຫີບ ຫຼື ແກັດ | 3 | 20 | 240 | 0,014 | | |
| | 2. ກ່ອງ, ກັບ | - | - | - | | | |
| | - ໄມ້ກ່ອງ ຫຼື ກັບ | 3 | 20 | 100 | 0,006 | | |
| | 3. ລັງ | - | - | - | | | |
| | - ໄມ້ລັງ | 3 | 20 | 50 | 0,003 | | |
| | 4. ຖັງໝັກ | - | - | - | | | |
| | - ໄມ້ຖັງໝັກ | 3 | 20 | 120 | 0,007 | | |
| | 5. ແກນມ້ວນສາຍກາບທຸກຊະນິດ | - | - | - | | - | ສຳເລັດຮູບ. |
| | - ໄມ້ແກນມ້ວນສາຍກາບທຸກຊະນິດ | 2 | 20 | 200 | 0,008 | | |
| | 6. ພະເລດ | - | - | - | | | |

| | | | | | | | |
|---|---|---|---|---|---|---|---|
| | - ໄມ້ໜ້າພະເລດ | 3 | 15 | 150 | 0,006 | | ສຳເລັດຮູບ |
| | - ໄມ້ຄານພະເລດ | 5 | 10 | 150 | 0,007 | | |
| | - ໄມ້ຕີນພະເລດ | 10 | 15 | 150 | 0,022 | | |
| 1629<br>ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້, ຫວາຍ, ໄມ້ປ່ອງ ແລະ ຖ່ານໄມ້<br>Manufacture of other products of wood, rattan, bamboo and charcoal | 1. ດ້າມເຄື່ອງມືຕ່າງໆທີ່ເຮັດດ້ວຍໄມ້ | 5 | 15 | 120 | 0,009 | | ສຳເລັດຮູບ |
| | 2. ໄມ້ໃສ່ໃນເກີບບູດ ແລະ ສົ້ນເກີບ | 4 | 20 | 30 | 0,0024 | | |
| | 3. ຂໍເກາະເສື້ອ | 2 | 4 | 50 | 0,0004 | | |
| | 4. ຜະລິດຕະພັນເຄື່ອງໄມ້ທີ່ໃຊ້ໃນເຮືອນ ແລະ ເຮືອນຄົວ | - | - | - | | | |
| | 5. ກະສວຍ, ຫລອດດ້າຍ ແລະ ສິ່ງອື່ນທີ່ເຮັດຈາກໄມ້ | 6 | 6 | 50 | 0,002 | 600 | |
| | 6. ເຄື່ອງຫັດຖະກຳໄມ້ອື່ນໆ | - | - | - | | | |
| | 7. ການຜະລິດວັດຖຸຖັກສານ | - | - | - | | | |
| | 8. ການຜະລິດຂອບແວ່ນ, ຮູບ ແລະ ງານສິນລະປະຕ່າງໆ | 4 | 10 | 200 | 0,008 | | |
| | 9. ການຜະລິດຄັນຮົ່ມ | 5 | 5 | 200 | 0,005 | | |
| | 10. ການຜະລິດກັບບັນຈຸກອກຢາ ແລະ ການຜະລິດອື່ນໆ ທີ່ກ່ຽວຂ້ອງ | 10 | 20 | 40 | 0,008 | | |
| | 11. ຖ່ານໄມ້ທຸກຊະນິດ | - | - | | | | |
| 3100<br>ໂຮງງານເຟີນີເຈີດ້ວຍໄມ້, ຫວາຍ ແລະ ໄມ້ປ່ອງ<br>Manufacture of furniture from wood, rattan and bamboo | 1. ຊຸດສະໂລງໄມ້ທຸກປະເພດ | | | | | | ສຳເລັດຮູບ |
| | • ຂາ | 15 | 15 | 60 | 0,013 | | |
| | • ຂາງ | 4 | 20 | 250 | 0,020 | | |
| | • ແປ້ນໜ້າ | 4 | 50 | 250 | 0,050 | | |
| | • ຊິ້ນສ່ວນປະກອບອື່ນໆ | - | - | - | | | |
| | 2. ຊຸດໂຕະໄມ້ທຸກປະເພດ | | | | | | |
| | • ຂາລ່ຽມ | 12 | 12 | 100 | 0,014 | | |
| | • ຂາກົມ | 20 | 20 | 100 | 0,031 | | |
| | • ຂາງ | 4 | 15 | 240 | 0,014 | | |
| | • ແປ້ນໜ້າ | 4 | 120 | 240 | 0,012 | | |
| | • ຊິ້ນສ່ວນປະກອບອື່ນໆ | - | - | - | | | |
| | 3. ຊຸດຕັ່ງໄມ້ທຸກປະເພດ | | | | | | |
| | • ຂາລ່ຽມ | 15 | 15 | 100 | 0,023 | ໄມ້ຄຸ້ມຄອງ | |
| | • ຂາກົມ | 20 | 20 | 100 | 0,031 | 120 | |
| | • ຂາງ | 4 | 15 | 250 | 0,015 | ໄມ້ຫວງຫ້າມ | |
| | • ແປ້ນໜ້າ | 3 | 40 | 250 | 0,030 | 280 | |
| | • ຊິ້ນສ່ວນປະກອບອື່ນໆ | - | - | - | | | |
| | 4. ຊຸດຕູ້ໄມ້ທຸກປະເພດ | | | | | | |
| | • ຂາ | 5 | 10 | 200 | 0,010 | | |
| | • ຂາງ, ໄມ້ເຊັ້ນ | 4 | 10 | 300 | 0,012 | | |
| | • ແປ້ນໜ້າ | 4 | 60 | 300 | 0,072 | | |
| | • ຊິ້ນສ່ວນປະກອບອື່ນໆ | - | - | - | | | |

| | | | | | | | |
|---|---|---|---|---|---|---|---|
| | 5. ຊຸດຕຽງໄມ້ທຸກປະເພດ | | | | | | ↑ |
| | • ຂາ | 15 | 15 | 60 | 0,013 | ໄມ້ຄຸ້ມຄອງ | |
| | • ຂາງ | 4 | 20 | 250 | 0,020 | 120 | |
| | • ແປ້ນຂອບ | 4 | 40 | 250 | | ໄມ້ຫວງຫ້າມ | ສຳເລັດຮູບ. |
| | • ແປ້ນໜ້າ | 2 | 15 | 250 | 0,008 | 280 | |
| | • ຊິ້ນສ່ວນປະກອບອື່ນໆ | - | - | - | | | ↓ |
| | 6. ເຄື່ອງຕົບແຕ່ງຕ່າງໆທີ່ເປັນເຟີນີເຈີ ທີ່ເຮັດດ້ວຍໄມ້. | | - | - | | | |

## IV. ການຕິດຕາມກວດກາການເຄື່ອນໄຫວຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້

### 4.1. ແຜນການເຄື່ອນໄຫວປະຈຳປີຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງແນະນຳບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຂຶ້ນແຜນການເຄື່ອນໄຫວປະຈຳປີ (ອ1-ອ6) ຕາມທີ່ໄດ້ລະບຸໃນຂໍ້ຕົກລົງເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008 ແລະ ອ7 ຕາມແຈ້ງການເລກທີ 663/ອຄ.ກອກ, ລົງວັນທີ 08/10/2008.

ການສະຫຼຸບ, ການລາຍງານແຜນດັ່ງກ່າວຕໍ່ກະຊວງອຸດສາຫະກຳ ແລະ ການຄ້ານັ້ນ ໃຫ້ປະຕິບັດຕາມທີ່ໄດ້ລະບຸໄວ້ໃນຂໍ້ທີ 5 ຂອງແຈ້ງການເລກທີ 663/ອຄ.ກອກ, ລົງວັນທີ 08/10/2008 ນັ້ນ.

### 4.2. ການຕິດຕາມ-ກວດກາໄມ້ ແລະ ຜະລິດຕະພັນໄມ້ໃນໂຮງງານອຸດສາຫະກຳປຸງແຕ່ງໄມ້

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ມີໜ້າທີ່ກວດກາ (ກວດກາສິນເຂົ້າ) ເພື່ອຮັບປະກັນຄວາມຖືກຕ້ອງຂອງໄມ້ (ວັດຖຸດິບ) ທີ່ຈະນຳເຂົ້າສູ່ການຜະລິດໃນໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍນຳໃຊ້ແບບຟອມ "<u>ປຶ້ມບັນທຶກການກວດກາໄມ້ເພື່ອນຳເຂົ້າປຸງແຕ່ງ</u>" (ຕາມເອກະສານຂັດຕິດມາພ້ອມນີ້) ທຸກໆຄັ້ງໃຫ້ລະອຽດຕາມລາຍການບັນຊີໄມ້ (ວັດຖຸດິບ) ທີ່ໂຮງງານນຳເຂົ້າມາຜະລິດໃນໂຮງງານ. ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຖືວ່າ **ເປັນການກວດກາສິນເຂົ້າ**.

### 4.3. ການກວດກາ ແລະ ການຢັ້ງຢືນຜະລິດຕະພັນໄມ້

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ທຸກໆຄັ້ງກ່ອນນຳອອກຈຳໜ່າຍຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ (ກວດກາສິນອອກ) ຕາມທີ່ໄດ້ກຳນົດໃນມາດຕາ 8 ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008 ໂດຍນຳໃຊ້ແບບຟອມ ອ5. ການກວດກາ ແລະ ການຢັ້ງຢືນຕ້ອງປະຕິບັດຕາມລະບຽບການຢ່າງເຂັ້ມງວດໂດຍບັນທຶກຕາມຮູບແບບ, ຂະໜາດ ແລະ ລັກສະນະຄວາມເປັນຈິງຂອງຜະລິດຕະພັນທີ່ໄດ້ກວດກາ. ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຖືວ່າ **ເປັນການກວດກາສິນອອກ**.

### 4.4. ຮູບແບບ ແລະ ຂະໜາດຜະລິດຕະພັນໄມ້ທີ່ແຕກຕ່າງຈາກການກຳນົດ

ຜະລິດຕະພັນໄມ້ທີ່ມີຮູບແບບ ແລະ ຂະໜາດໃຫຍ່ກວ່າການກຳນົດຢູ່ໃນມາດຕາ 3 ຂອງຂໍ້ຕົກລົງສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008 ແຕ່ໄດ້ຜະລິດບົນພື້ນຖານມາດຕະຖານການອອກແບບ ແລະ ຕາມຄວາມຕ້ອງການໃນການນຳໃຊ້ຕົວຈິງນັ້ນ ຫາກມີຈຸດປະສົງຈະສົ່ງອອກຕ່າງປະເທດ ຕ້ອງເປັນຜະລິດຕະພັນທີ່ສຳເລັດຮູບ, ຮັບປະກັນຂັ້ນຕອນການຜະລິດ, ການສ້າງມູນຄ່າເພີ່ມ

ແລະ ຕ້ອງສະເໜີຂໍການພິຈາລະ ນາອະນຸມັດຈາກກະຊວງອຸດສາຫະກຳ ແລະ ການຄ້າ. ໃນການດຳເນີນການດັ່ງກ່າວຕ້ອງປະກອບມີເອກະສານສຳຄັນທີ່ກ່ຽວຂ້ອງຄື:

- ສຳເນົາໃບອະນຸຍາດດຳເນີນກິດຈະການໂຮງງານ;
- ສຳເນົາໃບທະບຽນວິສາຫະກິດ;
- ສຳເນົາເອກະສານກ່ຽວກັບການໄດ້ມາຂອງໄມ້ (ວັດຖຸດິບ) ທີ່ນຳມາຜະລິດ;
- ສຳເນົາເອກະສານກ່ຽວກັບການຖອກພັນທະໄມ້ (ວັດຖຸດິບ);
- ເອກະສານແຜນການເຄື່ອນໄຫວປະຈຳປີຂອງໂຮງງານຕາມທີ່ໄດ້ລະບຸໃນຂໍ້ 4.1 ຂອງແຈ້ງການແນະນຳສະບັບນີ້;
- ໃບສັ່ງຊື້ ຫຼື ສັນຍາຊື້-ຂາຍ ຜະລິດຕະພັນ;
- ຮູບພາບ ຫຼື ຮູບແບບຂອງຜະລິດຕະພັນໄມ້;

## V. ການຈັດຕັ້ງປະຕິບັດ

ທຸກໆອຸດສາຫະກຳປຸງແຕ່ງໄມ້ ຕ້ອງດຳເນີນການຜະລິດຕາມການກຳນົດໃນແຈ້ງການແນະນຳສະບັບນີ້ໃຫ້ທົ່ວເຖິງທັງຖືກຕ້ອງ ແລະ ສອດຄ່ອງຕາມຈຸດປະສົງທີ່ໄດ້ລະບຸໃນໃບອະນຸຍາດດຳເນີນກິດຈະການໂຮງງານ, ພ້ອມກັນນີ້ກໍ່ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ໂດຍມີກົມອຸດສາຫະກຳ ຕິດຕາມ, ແນະນຳ ແລະ ກວດກາການຈັດຕັ້ງປະຕິບັດ; ບັນດາກົມທີ່ກ່ຽວຂ້ອງພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງອຳນວຍຄວາມສະດວກໃນການປຸງແຕ່ງ ແລະ ໃນການຈຳໜ່າຍຜະລິດຕະພັນໄມ້ທີ່ຜະລິດເປັນສິນຄ້າພາຍໃຕ້ລະບຽບກົດໝາຍ ແລະ ພ້ອມດຽວກັນນີ້ອຳນາດການປົກຄອງທ້ອງຖິ່ນມີສິດ ແລະ ໜ້າທີ່ໃນການຄຸ້ມຄອງທຸລະກິດໄມ້ຕາມລະບຽບກົດໝາຍປົກຄອງທ້ອງຖິ່ນ ດຽງຄູ່ກັບການປະສານສົມທົບຈັດຕັ້ງປະຕິບັດລະບຽບການນີ້ຢ່າງເຂັ້ມງວດ.

ບັນດາລະບຽບການອື່ນ ຊຶ່ງບໍ່ສອດຄ່ອງກັບແຈ້ງການແນະນຳສະບັບນີ້ລ້ວນແຕ່ຖືກລົບລ້າງ, ໂດຍສະເພາະລະບຽບການທີ່ຕິດພັນກັບການອະນຸຍາດເລື່ອຍໄມ້ ຊຶ່ງດຳເນີນການໂດຍຂະແໜງການກະສິກຳ ແລະ ປ່າໄມ້ໃນເມື່ອກ່ອນ ແລະ ຈະອອກລະບຽບການເພີ່ມເຕີມຕາມຄວາມຈຳເປັນໃນແຕ່ລະໄລຍະ.

ແຈ້ງການແນະນຳສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ.

ດຣ. ນາມ ວິຍະເກດ

ບ່ອນນຳສົ່ງ:
- ...ະນະເລຂາທິການລັດຖະບານ (ໃຊ້ຕາງລາຍງານ) 01 ສະບັບ.
- ...ະນະກວດກາສູນກາງ (ໃຊ້ຕາງລາຍງານ) 01 ສະບັບ.
- ...ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ (ເພື່ອຊີ້ນຳ) 01 ສະບັບ.
- ...ບດາກະຊວງ (ເພື່ອຂໍຄວາມຮ່ວມມື) 01 ສະບັບ.
- ...ບດາກົມອ້ອມຂ້າງກະຊວງອຸດສາຫະກຳ ແລະ ການຄ້າ 01 ...ະບັບ.
- ...ບມ້ຽນ 04 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

ກະຊວງ ອຸດສາຫະກຳ ແລະ ການຄ້າ

ພະແນກ ອຸດສາຫະກຳ ແລະ ການຄ້າ

ແຂວງ.........................................

# ບົດບັນທຶກ

## ກວດກາ ....................ເພື່ອເຂົ້າປຸງແຕ່ງ

- ອີງຕາມໃບຕິດຕາມການເຄື່ອນຍ້າຍສິນຄ້າຂອງ...............................................................................
ສະບັບເລກທີ ............/.........., ລົງວັນທີ ....../......../.........
- ອີງໃສ່ບັນຊີ .............ຂອງຂະແໜງກະສິກຳ ແລະ ປ່າໄມ້ສະບັບ ເລກທີ ....../......, ລົງວັນທີ .../...../.....
- ອີງໃສ່ໃບຮັບເງິນຂອງຂະແໜງການເງິນ ສະບັບ ເລກທີ ....../......, ລົງວັນທີ .../...../........ ຈຳນວນເງິນທັງໝົດ ...............................................................(ກີບ, ໂດລາ, ບາດ).
- ອີງໃສ່ການແຕ່ງຕັ້ງຂອງ .......... .............. .............. ລົງວັນທີ ......./........./.........

ຄະນະກຳມະການຂອງຂະແໜງການອຸດສາຫະກຳ ແລະ ການຄ້າໄດ້ພ້ອມກັນລົງກວດກາ............. ຕົວຈິງ ໂດຍສົມທົບກັບ.................................. ຢູ່ສະໜາມໂຮງງານ.........................ຕັ້ງຢູ່ບ້ານ ......... ເມືອງ...................... ປະກອບມີລາຍຊື່ດັ່ງນີ້:

1. ທ່ານ ..............................................
2. ທ່ານ ..............................................
3. ທ່ານ ..............................................
4. ທ່ານ ..............................................
5. ທ່ານ ..............................................

ຜ່ານການກວດກາ................................ຕົວຈິງໄດ້ເຫັນ .................. ຈຳນວນ......... ທ່ອນ, ຕໍ່, ທີ່ມີບໍລິມາດເທົ່າກັບ.........ແມັດກ້ອນ, ມີນ້ຳໜັກ ............ໂຕນ, ມີຮອຍຄ້ອນກາເບີ................., ຊຶ່ງໄດ້ເຄື່ອນ ຍ້າຍມາຈາກສະໜາມ II ຫຼື III ບ້ານ ................., ເມືອງ................, ແຂວງ.......................

ຄະນະກຳມະການກວດກາ ຢັ້ງຢືນວ່າ:..........................................................................................................

..........................................................................................................................................................

..........................................................................................................................................................

..........................................................................................................................................................

ລາຍລະອຽດໄມ້ດັ່ງລຸ່ມນີ້:

| ລ/ດ | ປະເພດ ຫຼື ຊະນິດ | ຈຳນວນ (ທ່ອນ, ຕໍ, ..........) | ບໍລິມາດ (ແມັດກ້ອນ) | ນ້ຳໜັກ (ໂຕນ) | ໝາຍເຫດ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| ລວມ | | | | | |

ຜ່ານການກວດກາຕົວຈິງ ແລະ ໄດ້ຮັບຮູ້ລົງລາຍເຊັນໃນບົດບັນທຶກສະບັບນີ້ຮ່ວມກັນນີ້ແລ້ວ ແມ່ນໄດ້ມອບພາລະໃຫ້ ......................................ຮັບຜິດຊອບ. ໃນກໍລະນີມີການຕົກເຮ່ຍເສຍຫາຍ ແມ່ນເປັນພາລະໜ້າທີ່ຂອງຜູ້ກ່ຽວຮັບຜິດຊອບຕໍ່ໜ້າກົດໝາຍຂອງບ້ານເມືອງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ໃຊ້ຕາງລາຍງານໃຫ້ຂັ້ນເທິງເພື່ອຂໍອະນຸມັດ ຜະລິດໃນຂັ້ນຕໍ່ໄປ.

ທີ່ ...................., ວັນທີ ...../....../.......

ຢັ້ງຢືນ

.................................

ຮັບຮູ້

ເຈົ້າຂອງໄມ້

ຫຼື

ເຈົ້າຂອງໂຮງງານ

ຄະນະກຳມະການ

.................................